ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------

ລັດຖະບານ ເລກທີ 06 /ລບ

ນະຄອນຫຼວງວຽງຈັນ, ວັນທີ 13.07.2016.

# ມະຕິຕົກລົງ

## ກອງປະຊຸມຄະນະລັດຖະບານ

## ຮ່ວມກັບເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ

ກອງປະຊຸມຄະນະລັດຖະບານຮ່ວມກັບເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ໄດ້ດຳເນີນແຕ່ວັນທີ 23-24 ມິຖຸນາ 2016 ທີ່ສຳນັກງານນາຍົກລັດຖະມົນຕີ ພາຍໃຕ້ການເປັນປະທານຂອງ ທ່ານ ທອງລຸນ ສີສຸລິດ, ນາຍົກລັດຖະມົນຕີ ໂດຍມີຄະນະລັດຖະບານ, ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າແຂວງ ແລະ ບັນດາແຂກຖືກເຊີນເຂົ້າຮ່ວມທັງໝົດ ຈຳນວນ 50 ທ່ານ. ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ພິຈາລະນາຮັບຮອງເອົາບັນຫາສຳຄັນ ດັ່ງນີ້:

1. ກອງປະຊຸມໄດ້ຮັບຟັງການລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໃນໄລຍະ 6 ເດືອນຕົ້ນຕົ້ນສົກປີ, ມາດຕະການຈັດຕັ້ງປະຕິບັດໄລຍະ 6 ເດືອນທ້າຍສົກປີ 2015-2016 ແລະ ການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2017, ຊຶ່ງລາຍງານໂດຍທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ທ່ານຜູ້ວ່າການທະນາຄານ ແຫ່ງ ສປປ ລາວ.

1.1. ກອງປະຊຸມຕີລາຄາວ່າ: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນການເງິນ ແລະ ແຜນເງິນຕາ ໄລຍະ 6 ເດືອນ ຕົ້ນສົກປີ 2015-2016 ເປັນໄລຍະໜຶ່ງທີ່ປະເທດເຮົາ ກໍ່ຄືການບໍລິຫານງານຂອງລັດຖະບານ ຍັງພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ ທັງບັນຫາໃນຕົວ ແລະ ນອກຕົວຫຼາຍດ້ານ, ເປັນຕົ້ນ: ການຈັດເກັບລາຍຮັບງົບປະມານ ທີ່ບໍ່ໄດ້ຕາມແຜນການ, ບັນຫາການຕົກຕໍ່າຂອງລາຄາສິນຄ້າກະສິກຳ, ບັນຫາໜີ້ສິນຄຸມເຄືອ, ສັດຕູພືດລະບາດ, ການເໜັງຕີງຂອງລາຄາສິນຄ້າອຸປະໂພກ-ບໍລິໂພກທີ່ສູງຂຶ້ນ, ລາຄານ້ຳມັນ-ບໍ່ແຮ່ ທີ່ຫຼຸດລົງ, ເສດຖະກິດຂອງພາກພື້ນ ແລະ ຂອງໂລກ ຍັງມີທ່ວງທ່າຂະຫຍາຍຕົວຊ້າ, ປະກົດການຫຍໍ້ທໍ້ໃນສັງຄົມ ແລະ ບັນຫາອື່ນໆ ໄດ້ສົ່ງຜົນກະທົບຕໍ່ການເຕີບໂຕທາງດ້ານເສດຖະກິດຂອງລາວເຮົາ. ເຖິງຢ່າງໃດກໍ່ຕາມ ພາຍໃຕ້ການນຳພາຂອງລັດຖະບານ ແລະ ດ້ວຍຄວາມພະຍາຍາມສູງ ແລະ ຄວາມສູ້ຊົນຂອງທຸກພາກສ່ວນ ໃນການຄຸ້ມຄອງ, ຕິດຕາມ-ກວດກາ ແລະ ຊຸກຍູ້ແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນສົກປີ ຢ່າງເປັນເຈົ້າການ ຈຶ່ງເຮັດໃຫ້ສະພາບໂດຍລວມຂອງເສດຖະກິດຍັງສືບຕໍ່ຂະຫຍາຍຕົວ, ມີສະຖຽນລະພາບ ແລະ ມີໝາກຜົນຫຼາຍດ້ານ, ແຕ່ຄຽງຄູ່ກັນນັ້ນ ກໍຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງຈຳນວນໜຶ່ງ ຊຶ່ງສະແດງອອກບາງດ້ານ ດັ່ງນີ້:

ກ. ຜົນສຳເລັດ:

(1) ສະພາບໂດຍລວມທາງດ້ານການເມືອງ ສືບຕໍ່ມີສະຖຽນລະພາບ, ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍທາງສັງຄົມໂດຍພື້ນຖານ, ການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ໄດ້ຮັບໝາກຜົນ

ຫຼາຍດ້ານ; ທຸກພາກສ່ວນນັບແຕ່ສູນກາງຮອດທ້ອງຖິ່ນ ກຳລັງເອົາໃຈໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ດ້ວຍຄວາມຮັບຜິດຊອບສູງ ຕໍ່ໜ້າທີ່ການເມືອງຂອງຕົນ.

(2) ການຄຸ້ມຄອງເສດຖະກິດມະຫາພາກຍັງມີສະຖຽນລະພາບ, ໂດຍລວມສະພາບເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊຶ່ງສະແດງໃຫ້ເຫັນຄື: ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວໃນ 6,9%; ອັດຕາເງິນເຟີ້ສະເລ່ຍ 8 ເດືອນຢູ່ໃນລະດັບ 1,11%; ຄ່າຂອງເງິນກີບມີຄວາມໝັ້ນຄົງ; ອັດຕາແລກປ່ຽນສືບຕໍ່ມີຄວາມສະຫງົບ ແລະ ໝັ້ນທ່ຽງ; ປະລິມານເງິນ $M_2$ ເພີ່ມຂຶ້ນ 12,98% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ; ຄັງສຳຮອງເງິນຕາຕ່າງປະເທດ ຢູ່ໃນລະດັບ 875,32 ລ້ານໂດລາ ສຫລ ສາມາດກຸ້ມການນຳເຂົ້າໄດ້ 5,6 ເດືອນ.

- ດ້ານການພັດທະນາ ແລະ ການປະຕິບັດບັນດາຕົວເລກຄາດໝາຍ ຂອງຂະແໜງການຕົ້ນຕໍ:

• ຂະແໜງກະສິກຳ-ປ່າໄມ້ ເພີ່ມຂຶ້ນປະມານ 3% ກວມເອົາ 23,7%; ຂະແໜງອຸດສາຫະກຳເພີ່ມຂຶ້ນປະມານ 9% ກວມເອົາ 28,8%; ຂະແໜງບໍລິການເພີ່ມຂຶ້ນປະມານ 8,4% ກວມເອົາ 39,8%; ພາສີ-ອາກອນ ຜະລິດຕະພັນ ແລະ ການນຳເຂົ້າ ເພີ່ມຂຶ້ນ 3,8% ກວມເອົາ 8,1%.

• ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ບັນລຸປະມານ 2.826 ຕື້ກີບ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 2,75%.

• ການຜະລິດກະແສໄຟຟ້າຄາດຄະເນບັນລຸໄດ້ 10.239 ລ້ານກິໂລວັດໂມງ ມູນຄ່າ 4.272 ຕື້ກີບ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 78,7%.

• ມູນຄ່າການສົ່ງອອກ ປະຕິບັດໄດ້ 1.726,9 ລ້ານໂດລາ ສຫລ ເທົ່າກັບ 46,6% ຂອງແຜນການປີ, ເພີ່ມຂຶ້ນ 7,9% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ.

• ມູນຄ່າການນຳເຂົ້າ 2.053,1 ລ້ານໂດລາ ສຫລ ເທົ່າກັບ 39% ຂອງແຜນການປີ, ຫຼຸດລົງ 14,2% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ.

(3) <u>ຕົວເລກການລົງທຶນ:</u>

• ການລົງທຶນຂອງລັດ ປະຕິບັດໄດ້ 3.576 ໂຄງການ, ໃນນັ້ນ ທຶນພາຍໃນ 2.230,51 ຕື້ກີບ ເທົ່າກັບ 58% ຂອງແຜນການປີ (3.800 ຕື້ກີບ).

• ການຊ່ວຍເຫຼືອເພື່ອການພັດທະນາ (ODA) ສາມາດຈັດຕັ້ງປະຕິບັດໄດ້ທັງໝົດ 340 ໂຄງການ, ມູນຄ່າ 553,09 ລ້ານໂດລາ ສຫລ ເທົ່າກັບ 79,12% ຂອງແຜນການປີ (700 ລ້ານໂດລາ ສຫລ), ຊຶ່ງໃນນັ້ນ ທຶນຊ່ວຍເຫຼືອລ້າ 263 ໂຄງການ ມູນຄ່າ 126,54 ລ້ານໂດລາ ສຫລ ແລະ ທຶນກູ້ຢືມ 77 ໂຄງການ ມູນຄ່າ 426,55 ລ້ານໂດລາ ສຫລ.

• ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ສາມາດດຶງດູດໄດ້ 1.222 ໂຄງການ, ມູນຄ່າ 3.134 ລ້ານໂດລາ ສຫລ ຫຼື ເທົ່າກັບ 25.586,38 ຕື້ກີບ ລື່ນແຜນການ 39% (ແຜນການແມ່ນ 18.400 ຕື້ກີບ).

(4) <u>ການປະຕິບັດແຜນງົບປະມານ:</u> ລາຍຮັບທັງໝົດປະຕິບັດໄດ້ 10.365,8 ຕື້ກີບ ເທົ່າກັບ 43,7% ຂອງແຜນດັດແກ້, ໃນຂະນະທີ່ລາຍຈ່າຍປະຕິບັດໄດ້ 16.951,5 ຕື້ກີບ ເທົ່າກັບ 54,5% ຂອງແຜນດັດແກ້.

(5). <u>ການພັດທະນາໃນຂົງເຂດວັດທະນະທຳ-ສັງຄົມ:</u> ວຽກງານພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ຕິດພັນກັບການເຮັດທົດລອງ 3 ສ້າງ ໄດ້ດຳເນີນການເປັນຂະບວນ ແລະ ມີຄວາມຄືບໜ້າຫຼາຍດ້ານ, ຊຶ່ງຫຼາຍແຂວງໄດ້ຕື່ນຕົວເປັນເຈົ້າການໃນຂະບວນການສ້າງບ້ານພັດທະນາ ແລະ ແກ້